ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນະຄອນຫຼວງວຽງຈັນ

ເລກທີ: 0526/ຈນວ
ລົງວັນທີ: 04 JUN 2018

# ຂໍ້ຕົກລົງ

## ວ່າດ້ວຍການກຳນົດຂອບເຂດ ແລະ ການປະເມີນຫົວໜ່ວຍລາຄາການທົດແທນຄ່າເສຍຫາຍ ໃຫ້ຜູ້ຖືກຜົນກະທົບຈາກໂຄງການທາງດ່ວນ ແຕ່ນະຄອນຫຼວງວຽງຈັນ ຫາ ວັງວຽງ ແຂວງວຽງຈັນ ໄລຍະຜ່ານເມືອງນາຊາຍທອງ

- ອີງຕາມ ມາດຕາ 19, 20 ໝວດທີ IV ຂອງກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015 ວ່າດ້ວຍພາລະບົດບາດ, ສິດ ແລະ ໜ້າທີ່ຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ.
- ອີງຕາມ ມາດຕາ 64 ຂອງກົດໝາຍວ່າດ້ວຍກະສິກຳ ສະບັບເລກທີ 01/98/ສພຊ, ລົງວັນທີ 10 ຕຸລາ 1998; ດຳລັດ ຂອງນາຍົກລັດຖະມົນຕີ ສະບັບເລກທີ 194/ນຍ, ລົງວັນທີ 14 ພະຈິກ 1994 ກ່ຽວກັບວິທີຄິດໄລ່ການທົດແທນສິ່ງປຸກສ້າງ; ມາດຕາ 71, 72 ໝວດທີ 3 ຂອງກົດໝາຍວ່າດ້ວຍທີ່ດິນ ສະບັບເລກທີ 04/ສພຊ, ລົງວັນທີ 21 ຕຸລາ 2003; ມາດຕາ 13 ການປະເມີນມູນຄ່າທີ່ດິນ ຂອງດຳລັດ ສະບັບເລກທີ 88/ນຍ, ລົງວັນທີ 03 ມິຖຸນາ 2008 ວ່າດ້ວຍການຈັດຕັ້ງປະຕິບັດກົດ ໝາຍວ່າດ້ວຍທີ່ດິນ ແລະ ດຳລັດ ສະບັບເລກທີ 84/ນຍ, ລົງວັນທີ 05 ເມສາ 2016 ວ່າດ້ວຍການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນ ຈາກໂຄງການພັດທະນາ.
- ອີງຕາມ ແຈ້ງການ ຂອງຫ້ອງວ່າການລັດຖະບານ ສະບັບເລກທີ 663/ຫລບ.ກລຂ, ລົງວັນທີ 24 ເມສາ 2015.
- ອີງຕາມ ມະຕິກອງປະຊຸມສະໄໝວິສາມັນ ເທື່ອທີ 2 ຂອງສະພາປະຊາຊົນ ນະຄອນຫຼວງວຽງຈັນ ຊຸດທີ I ຄັ້ງວັນທີ 29 ພຶດສະພາ 2018 ສະບັບເລກທີ 022/ສປນວ, ລົງວັນທີ 04 ມິຖຸນາ 2018.

## ເຈົ້າຄອງນະຄອນຫຼວງວຽງຈັນ ອອກຂໍ້ຕົກລົງ:

**ມາດຕາ 01 ຈຸດປະສົງ.**

ຂໍ້ຕົກລົງສະບັບນີ້ ກຳນົດຫລັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ, ຕິດຕາມ, ກວດກາ, ກຳນົດລາຄາທົດແທນສິ່ງກີດຂວາງ ແລະ ການຈັດສັນຜູ້ຖືກຜົນກະທົບ ເພື່ອຮັບປະກັນໃຫ້ແກ່ການແກ້ໄຂ, ໄກ່ເກ່ຍຜູ້ຖືກຜົນກະທົບຈາກທາງດ່ວນໄດ້ຮັບການທົດແທນ, ໄດ້ຮັບການຊ່ວຍເຫລືອ ແລະ ຟື້ນຟູຊີວິດການເປັນຢູ່ຂອງເຂົາເຈົ້າດີຂຶ້ນກວ່າເກົ່າ ຫລື ເທົ່າເດີມ, ພ້ອມທັງເຮັດໃຫ້ການແກ້ໄຂ, ໄກ່ເກ່ຍມີຄວາມເປັນເອກະພາບກັນໃນການຈັດຕັ້ງປະຕິບັດໃຫ້ມີຄວາມຖືກຕ້ອງ ເໝາະສົມ ແລະ ມີປະສິດທິຜົນສູງ.

**ມາດຕາ 02 ກ່ຽວກັບໂຄງການທາງດ່ວນ.**

ໂຄງການກໍ່ສ້າງທາງດ່ວນແຕ່ນະຄອນຫຼວງວຽງຈັນ ຫາ ວັງວຽງ ແຂວງວຽງຈັນ ໄລຍະຜ່ານເມືອງນາຊາຍທອງ ຕໍ່ໄປນີ້ເອີ້ນຫຍໍ້ວ່າ " ໂຄງການທາງດ່ວນ " ແມ່ນການລົງທຶນຂອງບໍລິສັດ ພັດທະນາທາງດ່ວນ ລາວ-ຈີນ

ຈຳກັດ ຕໍ່ໄປນີ້ເອີ້ນຫຍໍ້ວ່າ " ບໍລິສັດຮ່ວມທຶນ " ໃນຮູບແບບ BOT ຕາມທີ່ໄດ້ເຊັນສັນຍາສຳປະທານ ກັບລັດຖະບານ ແຫ່ງ ສປປ ລາວ ຄັ້ງວັນທີ 04 ເມສາ 2018. ໂຄງການທາງດ່ວນນີ້ ມີຄວາມຍາວທັງໝົດ 109,1 ກິໂລແມັດ ມີມູນຄ່າກໍ່ສ້າງລວມທັງໝົດ 1.292.779.105 ໂດລາສະຫະລັດ, ມີໄລຍະສຳປະທານທັງໝົດ 50 ປີ. ສະເພາະຊ່ວງໄລຍະເມືອງນາຊາຍທອງ ແມ່ນຜ່ານ 26 ບ້ານ, ແຕ່ບ້ານໄຊມຸງຄຸນ ຫາບ້ານນາດີ ມີຄວາມຍາວ 31,02 ກິ ໂລແມັດ.

ມາດຕາ 03 ຂອບເຂດນຳໃຊ້.

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບການຈັດຕັ້ງຂອງພັກ-ລັດ, ການຈັດຕັ້ງມະຫາຊົນ, ສັງຄົມ, ບຸກຄົນ, ນິຕິບຸກຄົນ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ເພື່ອທົດແທນສິ່ງກີດຂວາງ ແລະ ຈັດສັນຜູ້ທີ່ຖືກຜົນກະທົບຈາກການໂຄງການທາງດ່ວນ ມີໄລຍະທາງ 31,02 ກິໂລແມັດ, ຜ່ານ 26 ບ້ານ, ແຕ່ບ້ານໄຊມຸງຄຸນ ຫາບ້ານນາດີ ເມືອງນາຊາຍທອງ ນະຄອນຫລວງວຽງຈັນ.

ມາດຕາ 04 ເຂດສະຫງວນຂອງໂຄງການທາງດ່ວນ.

- ເຂດສະຫງວນຂອງໂຄງການທາງດ່ວນ ຊ່ວງໄລຍະເມືອງນາຊາຍທອງ ມີຄວາມຍາວທັງໝົດ 31,02 ກິໂລແມັດ, ສ່ວນຄວາມກ້ວາງ-ຄວາມແຄບ ຕາມສອງຟາກແລວທາງດ່ວນ ແມ່ນມີຄວາມແຕກຕ່າງກັນ ຂຶ້ນກັບແບບ ແລະ ຄວາມຈຳເປັນໃນການນຳໃຊ້ພື້ນທີ່ຕົວຈິງຂອງໂຄງການ, ບາງຈຸດເປັນທາງເອັ້ນ ບາງຈຸດເປັນສະຖານີຂະໜາດນ້ອຍ ຫຼື ສະຖານີຂະໜາດໃຫຍ່ ເຊິ່ງຂອບເຂດສະຫງວນເຫຼົ່ານັ້ນ ຈະຖືກຈັດເຂົ້າໃນລະບົບການທົດແທນ ແລະ ກາຍເປັນເຂດສະຫງວນຂອງໂຄງການທາງດ່ວນ ຢ່າງຖາວອນ.
- ທີ່ດິນແຕ່ລະຕອນ ທີ່ເຫຼືອຈາກເຂດສະຫງວນໂຄງການທາງດ່ວນ ແມ່ນບໍລິສັດຮ່ວມທຶນ ເປັນຜູ້ຮັບຜິດຊອບອອກຄ່າໃຊ້ຈ່າຍໃນການດັດແກ້ ແລະ ອອກໃບຕາດິນໃໝ່ໃນສ່ວນທີ່ເຫຼືອ ໃຫ້ຜູ້ຖືກຜົນກະທົບ, ທີ່ດິນ ທີ່ຍັງເຫຼືອນ້ອຍ ຫຼື ຫຼາຍແມ່ນຍັງເປັນສິດໃຊ້, ສິດນຳໃຊ້ທີ່ດິນ ທີ່ຖືກຕ້ອງຕາມລະບຽບກົດໝາຍ ຂອງຜູ້ຖືກຜົນກະທົບ.

ມາດຕາ 05 ຫຼັກການ ແລະ ວິທີຄິດໄລ່ຄ່າທົດແທນ.

5.1. ກຳນົດຫຼັກການ ແລະ ວິທີຄິດໄລ່ຫົວໜ່ວຍລາຄາທົດແທນສິດໃຊ້ ແລະ ສິດນຳໃຊ້ທີ່ດິນ ຢູ່ແຕ່ລະບ້ານ ໂດຍເອົາລາຄາຢູ່ເຂດປະເມີນມູນຄ່າທີ່ດິນ ຕາມຂໍ້ຕົກລົງເລກທີ 352/ສນຍ.ອຄດຊ, ລົງວັນທີ 31 ພຶດສະພາ 2011 ທີ່ໃຊ້ສຳລັບການຈົດທະບຽນມອບ-ໂອນ ສິດນຳໃຊ້ທີ່ດິນປະຈຸບັນ ບວກກັບລາຄາຊື້ຂາຍສິດນຳໃຊ້ທີ່ດິນ ຢູ່ແຕ່ລະເຂດ ມາສະເລ່ຍເປັນລາຄາທົດແທນ ຕາມບັນຍັດໄວ້ໃນດຳລັດ ວ່າດ້ວຍການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນ ສະບັບເລກທີ 84/ນຍ, ລົງວັນທີ 05 ເມສາ 2016.

5.2. ຫຼັກການ ແລະ ວິທີຄິດໄລ່ການທົດແທນສິ່ງປຸກສ້າງ ແມ່ນໃຫ້ປະຕິບັດຕາມຂໍ້ຕົກລົງຂອງນາຍົກລັດຖະມົນຕີ ສະບັບເລກທີ 69/ນຍ, ລົງວັນທີ 05/08/2010 ວ່າດ້ວຍການຮັບຮອງເອົາ ແລະ ປະກາດໃຊ້ຫົວໜ່ວຍກໍ່ສ້າງຂົວ-ທາງ ແລະ ເຄຫາສະຖານ ແລະ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວການກວດກາຕີລາຄາເຮືອນ, ສິ່ງປຸກສ້າງ ແລະ ວັດຖຸຮັບໃຊ້ໃນຄົວເຮືອນ ສະບັບເລກທີ 194/ນຍ, ລົງວັນທີ 14 ພະຈິກ 1994 ໂດຍບໍ່ຄິດໄລ່ມູນຄ່າຫຼຸ້ຍຫ້ຽນເຂົ້ານຳ.

5.3. ຫຼັກການວິທີຄິດໄລ່ການທົດແທນຜົນລະປູກ ແມ່ນໃຫ້ປະຕິບັດຕາມມາດຕາ 64 ຂອງກົດໝາຍວ່າດ້ວຍກະ ສິກຳ ສະບັບເລກທີ 01/98/ສພຊ, ລົງວັນທີ 10 ຕຸລາ 1998.

5.4. ຜູ້ຖືກຜົນກະທົບ ສາມາດຍ້າຍເອົາສິ່ງປຸກສ້າງ ແລະ ຕົ້ນໄມ້ຂອງຕົນ ອອກໄປໄດ້ ໂດຍນຳໃຊ້ເງິນທີ່ໄດ້ຮັບຈາກການທົດແທນຄ່າເສຍຫາຍ, ແຕ່ການຍ້າຍເອົາສິ່ງປຸກສ້າງ ແລະ ຕົ້ນໄມ້ໄປນຳໃຊ້ນັ້ນ ຈະຕ້ອງປະຕິບັດໃຫ້ແລ້ວທັນຕາມກຳນົດເວລາທີ່ທາງໂຄງການທາງດ່ວນວາງໄວ້, ກຳນົດເວລາດັ່ງກ່າວ ຄະນະຮັບຜິດຊອບໂຄງການທາງດ່ວນ ຈະເປັນຜູ້ແຈ້ງໃຫ້ຜູ້ຖືກຜົນກະທົບຊາບ ຖ້າກາຍເວລາທີ່ໄດ້ກຳນົດໄວ້ ທາງໂຄງການທາງດ່ວນຈະນຳໃຊ້ກົນຈັກອານາໄມເອົາສິ່ງກີດຂວາງອອກ.

**ມາດຕາ 06 ຫົວໜ່ວຍລາຄາທົດແທນຄ່າເສຍຫາຍ ຈາກຜົນກະທົບຕໍ່ສິດໃຊ້, ສິດນຳໃຊ້ທີ່ດິນ, ສິ່ງປຸກສ້າງ ແລະ ພືນລະປູກ.**

6.1. ຫົວໜ່ວຍລາຄາທົດແທນຄ່າເສຍຫາຍ ຈາກຜົນກະທົບຕໍ່ສິດໃຊ້ ແລະ ສິດນຳໃຊ້ທີ່ດິນ ທີ່ຖືກເຂດສະຫງວນໂຄງການທາງດ່ວນ ແມ່ນໃຫ້ປະຕິບັດຕາມຕາຕະລາງຄິດໄລ່ຫົວໜ່ວຍລາຄາທົດແທນຄ່າເສຍຫາຍ ແຕ່ລະປະເພດ ຂອງພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ ສະບັບເລກທີ 1811/ພຊສ.ນວ, ລົງວັນທີ 04 ມິຖຸນາ 2018 ເປັນເອກະສານຊ້ອນທ້າຍທີ 1 ຂອງຂໍ້ຕົກລົງສະບັບນີ້.

6.2. ຫົວໜ່ວຍລາຄາທົດແທນຄ່າເສຍຫາຍ ຈາກຜົນກະທົບຕໍ່ສິ່ງປຸກສ້າງ ໃນເຂດສະຫງວນຂອງໂຄງການທາງດ່ວນ ແມ່ນໃຫ້ປະຕິບັດຕາມຕາຕະລາງຄິດໄລ່ຫົວໜ່ວຍລາຄາທົດແທນຄ່າເສຍຫາຍ ແຕ່ລະປະເພດຂອງພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ ສະບັບເລກທີ 1548/ຍທຂ.ນວ, ລົງວັນທີ 22 ມີນາ 2018 ຊຶ່ງເປັນເອກະສານຊ້ອນທ້າຍທີ 2 ຂອງຂໍ້ຕົກລົງສະບັບນີ້.

6.3. ຫົວໜ່ວຍລາຄາທົດແທນຄ່າເສຍຫາຍ ຈາກຜົນກະທົບຕໍ່ພືນລະປູກ ໃນເຂດສະຫງວນຂອງໂຄງການທາງດ່ວນ ແມ່ນໃຫ້ປະຕິບັດຕາມຕາຕະລາງຄິດໄລ່ຫົວໜ່ວຍລາຄາທົດແທນຄ່າເສຍຫາຍ ແຕ່ລະປະເພດ ຂອງພະແນກກະສິກຳ ແລະ ປ່າໄມ້ ນະຄອນຫຼວງວຽງຈັນ ສະບັບເລກທີ 1197/ກປ.ນວ, ລົງວັນທີ 19 ມີນາ 2018 ເປັນເອກະສານຊ້ອນທ້າຍທີ 3 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 07 ແຫຼ່ງທຶນ ແລະ ວິທີການທົດແທນ.**

7.1. ງົບປະມານໃນການທົດແທນໃຫ້ຜູ້ຖືກຜົນກະທົບ ຈາກໂຄງການທາງດ່ວນ ແມ່ນນຳໃຊ້ງົບປະມານຂອງບໍລິສັດຮ່ວມທຶນ.

7.2. ຜູ້ທີ່ຖືກຜົນກະທົບ ຈາກໂຄງການທາງດ່ວນ ຕ້ອງໄດ້ຮັບຄ່າທົດແທນ ຕາມຫົວໜ່ວຍລາຄາ ຂອງຂະແໜງການກ່ຽວຂ້ອງ ທີ່ອົງການປົກຄອງໄດ້ຕົກລົງຮັບຮອງເອົາຢ່າງເປັນທາງການແລ້ວ.

7.3. ການທົດແທນ ສິດໃຊ້-ສິດນຳໃຊ້ທີ່ດິນ, ສິ່ງປຸກສ້າງ ແລະ ພືນລະປູກ ຈະມີບົດບັນທຶກລະຫວ່າງ ຜູ້ໄດ້ຮັບຜົນກະທົບ ກັບຄະນະກຳມະການໄກ່ເກ່ຍ ແລະມີລາຍເຊັນອະນຸມັດຈ່າຍຈາກຜູ້ໄດ້ຮັບມອບໝາຍຈາກຫົວໜ້າໂຄງການທາງດ່ວນ ຕາມການຕົກລົງຂອງລັດຖະບານ. ມູນຄ່າທົດແທນໃຫ້ຜູ້ຖືກຜົນກະທົບ ພາຍຫຼັງເຊັນຮັບຮອງເອົາຄ່າທົດແທນແລ້ວ ຈະໄດ້ໂອນຜ່ານບັນຊີເງິນຝາກໂຄງການທາງດ່ວນ ທີ່ທະນາຄານການຄ້າຕ່າງປະເທດລາວມະຫາຊົນ ຫລື ມອບເປັນແຊັກເງິນສົດ ໃຫ້ຜູ້ຖືກຜົນກະທົບໂດຍກົງ.

7.4. ທີ່ດິນບາງຕອນຖືກໂຄງການທາງດ່ວນ ທີ່ຍັງມີເນື້ອທີ່ເຫລືອໜ້ອຍ ຖ້າຫາກມີການຮ້ອງຂໍຈາກຜູ້ໄດ້ຮັບຜົນກະທົບ ໃຫ້ບໍລິສັດຮ່ວມທຶນ ທົດແທນເອົາເລີຍ. ການດັດແກ້ໃບຕາດິນສ່ວນທີ່ເຫຼືອໃຫ້ບໍລິສັດຮ່ວມທຶນຮັບຜິດຊອບຄ່າທຳນຽມການດັດແກ້ໃບຕາດິນ ໃຫ້ເຈົ້າຂອງສິດນຳໃຊ້ທີ່ດິນ.

7.5. ຜູ້ຖືກຜົນກະທົບ ມີສິ່ງປຸກສ້າງ ມີທີ່ດິນຕອນດຽວດຳລົງຊີວິດຢູ່ປະຈຳ ໂຄງການທາງດ່ວນ ຕ້ອງໄດ້ທົດແທນເປັນດິນ ຫລື ເປັນມູນຄ່າ.

7.6. ບໍລິສັດຮ່ວມທຶນພັດທະນາທາງດ່ວນ ລາວ-ຈີນ ຈຳກັດ ຕ້ອງໄດ້ປະຕິບັດການທົດແທນໃຫ້ສຳເລັດກ່ອນດຳເນີນການກໍ່ສ້າງ.

**ມາດຕາ 08 ພາກສ່ວນຮັບຜິດຊອບໂຄສະນາ ປະຊາສຳພັນ.**

ຄະນະກຳມະການໄກ່ເກ່ຍສິ່ງກີດຂວາງໂຄງການທາງດ່ວນ, ບໍລິສັດຮ່ວມທຶນ, ບັນດາບ້ານກ່ຽວຂ້ອງ, ເມືອງນາຊາຍທອງ, ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ພະແນກໂຍທາທິການ ແລະ ຂົນສົ່ງ ພະແນກກະສິກຳ ແລະ ປ່າໄມ້, ພະແນກແຜນການ ແລະ ການລົງທຶນ ແລະ ທຸກການຈັດຕັ້ງຂອງພັກ-ລັດ ຂອງສັງຄົມທີ່ກ່ຽວຂ້ອງ ມີໜ້າທີ່ໃນການໂຄສະນາ, ປະຊາສຳພັນ ແລະ ປຸກລະດົມປະຊາຊົນຜູ້ຖືກຜົນກະທົບ ໃຫ້ເຂົ້າໃຈ, ເຫັນດີ, ປະກອບສ່ວນ ແລະ ອຳນວຍຄວາມສະດວກລັດຖະບານ ເພື່ອຈັດຕັ້ງປະຕິບັດໂຄງການທາງດ່ວນເສັ້ນປະຫັວດສາດນີ້ ໃຫ້ໄດ້ຮັບຜົນສຳເລັດເປັນຢ່າງດີ.

**ມາດຕາ 09 ການແກ້ໄຂຂໍ້ຂັດແຍ່ງ.**

ກໍລະນີ ຜູ້ຖືກຜົນກະທົບບໍ່ຮັບຄ່າທົດແທນຕາມມູນຄ່າທີ່ຕົກລົງກັນເປັນລາຍລັກອັກສອນແລ້ວ ຫຼື ກໍລະນີເກີດຂໍ້ຂັດແຍ່ງອື່ນໆທີ່ກ່ຽວຂ້ອງກັບການທົດແທນ ໃນເຂດໂຄງການທາງດ່ວນ ຜູ້ຖືກຜົນກະທົບມີສິດສະ ເໜີແກ້ໄຂທາງບໍລິຫານ ຫາການຈັດຕັ້ງລັດທີ່ກ່ຽວຂ້ອງ ແລະ ບໍລິສັດຮ່ວມທຶນ.

**ມາດຕາ 10 ການຈັດຕັ້ງປະຕິບັດ.**

ມອບໃຫ້ຄະນະຊີ້ນຳໂຄງການ, ຄະນະກຳມະການໄກ່ເກ່ຍສິ່ງກີດຂວາງໂຄງການທາງດ່ວນ, ອົງການປົກຄອງເມືອງນາຊາຍທອງ, ອົງການປົກຄອງບ້ານທີ່ກ່ຽວຂ້ອງ, ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ພະແນກໂຍທາທິການ ແລະ ຂົນສົ່ງ, ພະແນກກະສິກຳ ແລະ ປ່າໄມ້, ພະແນກຍຸຕິທຳ, ພະແນກແຜນການ ແລະ ການລົງທຶນ, ທຸກການຈັດຕັ້ງຂອງພັກ-ລັດ, ສັງຄົມ ນະຄອນຫຼວງວຽງຈັນ ບໍລິສັດຮ່ວມທຶນ ແລະ ຜູ້ຖືກຜົນກະທົບທັງໝົດ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ ແລະ ທັນເວລາ.

**ມາດຕາ 11** ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ພາຍຫຼັງລົງລາຍເຊັນ ແລະ ເອົາລົງເວບໄຊ ຂອງນະຄອນຫຼວງວຽງຈັນ 15 ວັນ ເປັນຕົ້ນໄປ.

ເຈົ້າຄອງນະຄອນຫຼວງວຽງຈັນ

ປອ.ສິນລະວົງ ຄູດໄພທູນ

ບ່ອນສົ່ງ:

- ເຈົ້າຄອງ-ຮອງເຈົ້າຄອງ ນະຄອນຫຼວງວຽງຈັນ 03 ສະບັບ;
- ຫ້ອງວ່າການສູນກາງພັກ 01 ສະບັບ;
- ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ 01 ສະບັບ;
- ຄະນະເລຂາທິການ ສະພາແຫ່ງຊາດ 01 ສະບັບ;
- ກະຊວງໂຍທາທິການ ແລະ ຂົນສົ່ງ 01 ສະບັບ;
- ກະຊວງກະສິກຳ ແລະ ປ່າໄມ້ 01 ສະບັບ;
- ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ 01 ສະບັບ;
- ກະຊວງແຜນການ ແລະ ການລົງທຶນ 01 ສະບັບ;
- ສະພາປະຊາຊົນ ນວ 01 ສະບັບ;
- ຄະນະຊີ້ນຳໂຄງການ ແລະ ຄະນະກຳມະການໄກ່ເກ່ຍໂຄງການ...01 ສະບັບ;
- ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນວ01 ສະບັບ;
- ພະແນກໂຍທາທິການ ແລະ ຂົນສົ່ງ ນວ 01 ສະບັບ;
- ພະແນກກະສິກຳ ແລະ ປ່າໄມ້ ນວ 01 ສະບັບ;
- ພະແນກການເງິນ ນວ 01 ສະບັບ;
- ພະແນກແຜນການ ແລະ ການລົງທຶນ ນວ 01 ສະບັບ;
- ເມືອງນາຊາຍທອງ ນວ 01 ສະບັບ;
- ນາຍບ້ານກ່ຽວຂ້ອງ ບ້ານລະ 01 ສະບັບ;
- ເກັບມ້ຽນສຳເນົາ 02 ສະບັບ.